## ພຣະນະຄອນວຽງຈັນ ແລະ ພຣະຣາຊວັງ

"ເມືອງສຳຄັນທີ່ພຣະເຈົ້າແຜ່ນດິນສະຖິດຢູ່ເປັນປົກກະຕິນັ້ນ ຢູ່ກາງພຣະຣາຊອານາຈັກ ປະມານ 18 ດີກຣີ (ອົງສາ) ຈາກຂວັ້ນໂລກ. ພຣະນະຄອນນັ້ນຮຽກວ່າ ລ້ານຊ້າງ, ຂ້າງນຶ່ງມີກຳແພງສູງອ້ອມ ແລະ ຕະຄອງໃຫຍ່ເລິກ, ຂ້າງນຶ່ງມີນ້ຳຂອງຕັນ ອັນເປັນກຳແພງປ້ອງກັນສັດຕູໄດ້ດີ. ພຣະຣາຊວັງ ເຊິ່ງກໍ່ສ້າງຢ່າງມີລະບຽບ ແລະ ມີລ່ຽມອັນເຫມາະສົມນັ້ນ ງາມທີ່ສຸດ ຢູ່ໄກໆກໍຫລຽວເຫັນຍອດ. ມັນມີຄວາມຈິງຢູ່ວ່າ ພຣະຣາຊວັງນີ້ ກວ້າງທີ່ສຸດ ແລະ ຄົນເຮົາບໍ່ສັງເກດຄັກກໍນັບວ່າເປັນເມືອງນຶ່ງກໍໄດ້ ເພາະວ່າ ຄົນຢູ່ໃນທັ້ນ ມີມາກຫລາຍເຫລືອລົ້ນ. ຫ້ອງບັນທົມຂອງພຣະເຈົ້າແຜ່ນດິນ ມີຜັກຕູອັນຄວັດເປັນລວດລາຍງາມທີ່ສຸດ ນອກນັ້ນ ກໍມີຫລາຍຫ້ອງອີກງາມເກືອບທໍ່ໆກັນ ແລະ ກໍມີຫ້ອງນຶ່ງອີກກວ້າງໃຫຍ່ຫລາຍ. ໄມ້ຊຶ່ງໃຊ້ປຸກຜາສາດນີ້ ເປັນໄມ້ທີ່ແຂງແກ່ນດີ, ທັງນອກ ແລະ ໃນຝາ ມີລວດລາຍງາມທີ່ສຸດ ແລະ ຟອກຄຳ ອັນພາໃຫ້ຮູ້ສຶກວ່າ ແມ່ນເອົາຄຳແທ້ໆມາປະດັບໃສ່, ເດີ່ນພຣະຣາຊວັງນັ້ນ ກວ້າງຂວາງຫລາຍ ມີເຮືອນປຸກລຽນກັນເປັນແຖວສຳລັບພວກເສນາ ແລະ ນາຍທະຫານ. ຖ້າຈະໃຫ້ຂ້າພະເຈົ້າບັນຍາຍທຸກສິ່ງທຸກຢ່າງທີ່ປະກອບພຣະຣາຊວັງນີ້ ເຊັ່ນ ຄຸນຄ່າຂອງພຣະຣາຊວັງ ຫ້ອງນອນທັງຫລາຍ ສວນອາດອຸທິຍານ ແລະ ອີກຫລາຍຢ່າງກ່ຽວກັບພຣະຣາຊວັງ ຂ້າພະເຈົ້າຄົງຂຽນປຶ້ມຫົວໃຫຍ່ເຫລັ້ມນຶ່ງອີກຕ່າງຫາກ ".

## ບ້ານເຮືອນ

"ເຄຫາສະຖານຂອງເຈົ້ານາຍຜູ້ໃຫຍ່ ແລະ ພວກເສດຖີນັ້ນໃຫຍ່ສູງ ແລະງາມທີ່ສຸດ ເຮັດດ້ວຍໄມ້ ແລະ ມີຮູບຄວັດລາຍໃສ່ຫລາຍ ຫລືຫນ້ອຍ ຕາມພາທະນະຂອງເຈົ້າຂອງ ແລະ ຂ້າພະເຈົ້າຂໍເວົ້າຕາມຄວາມຈິງອີກວ່າ ສ່ວນພວກໄພ່ນ້ອຍຣາສດອນບໍ່ໄດ້ຢູ່ເຮືອນງາມດັ່ງນັ້ນເລີຍ ເປັນເຮືອນສູງ ແຕ່ເບິ່ງແລ້ວຄືຮ້ານມຸງຫຍ້າ ຫລືຕູບກໍວ່າໄດ້ ມີແຕ່ພຣະສົງອົງຄະເຈົ້າ ຊຶ່ງໄດ້ຢູ່ດີແດ່ ເພາະພວກເພິ່ນນີ້ ມີອຳນາດປຸກວັດດ້ວຍດິນຈີ່ ແລະ ດ້ວຍຫີນ ".

## ພົລເມືອງ

"ເນື່ອງຈາກດິນດີ ແລະ ສິ່ງທີ່ເປັນປໂຍດແກ່ຊີວິດ ກໍມີມາກຫລາຍຢ່າງອຸດົມສົມບູນ ພົລເມືອງຂອງພຣະຣາຊອານາຈັກ ກໍມີຫລາຍເຕັມທີ່. ຕາມສຳມະໂນຄົວທີ່ເພິ່ນເວົ້າໃນເວລານັ້ນ ມີຊາຍສະກັນທັນທ້າວ ຖືອາວຸດຮັບໃຊ້ໃນກອງທັບໄດ້ ມີ 5 ແສນຄົນ. ນອກຈາກຜູ້ເຖົ້າຜູ້ແກ່ເຊິ່ງມີມາກມາຍ ແຕ່ຍັງແຂງແຮງຢູ່ ມີຮອດຜູ້ເຖົ້າອາຍຸຮ້ອຍປີ ກໍຍັງສາມາດນັບເຂົ້າໃນຊາຍສະກັນ